ລາວ G-Chat Government Chat

# ລະບົບການສື່ສານຂອງພາກລັດ

ແອັບແຊັດໃນຮູບແບບໃໝ່

## ຄູ່ມືການຕິດຕັ້ງ ແລະ ນຳໃຊ້ ລະບົບ ສື່ສານພາກລັດ G-Chat

## ສຳຫຼັບ ລະບົບປະຕິບັດການ Android

ສູນບໍລິຫານລັດດ້ວຍເອເລັກໂຕຣນິກ (ສລອ)

E-Government Center (EGC)

www.egc.gov.la

# ສາລະບານ

1. ຄວາມຕ້ອງການ ທາງດ້ານລະບົບປະຕິບັດການຂອງ G-Chat......................................................2

2. ຂັ້ນຕອນການດາວໂຫຼດໂປຣແກຣມ. .................................................................................2

3. ຂັ້ນຕອນການຕິດຕັ້ງ ລະບົບການສື່ສານຂອງພາກລັດ G-Chat. ....................................................4

4. ແນະນຳການເຂົ້າໃຊ້ລະບົບການສື່ສານຂອງພາກລັດ G-Chat ເບື້ອງຕົ້ນ ...........................................5

5. ການນຳໃຊ້ລະບົບການສື່ສານຂອງພາກລັດ G-Chat.................................................................6

5.1 ໜ້າຕ່າງຂອງຜູ້ໃຊ້ງານ (ຂ້ອຍ ຫຼື Me)............................................................................6

5.2 ໜ້າຕ່າງຂອງຂໍ້ຄວາມ (Message)..................................................................................7

5.3 ໜ້າຕ່າງຂອງລາຍການຕິດຕໍ່ (Adress Book)....................................................................9

## 1. ຄວາມຕ້ອງການ ທາງດ້ານລະບົບປະຕິບັດການຂອງ G-Chat

ກ່ອນຈະຕິດຕັ້ງລະບົບ ສື່ສານພາກລັດ G-Chat ຈະຕ້ອງໄດ້ກວດສອບອຸປະກອນຂອງທ່ານກ່ອນ ວ່າມີຄວາມພ້ອມໃນການຮອງຮັບການເຮັດວຽກຂອງແອັບພິເຄຊັນ ຫຼື ບໍ່ ດັ່ງນີ້:

| ອຸປະກອນ | ລະບົບປະຕິບັດການ |
|---|---|
| ໂທລະສັບ, ແທັບເລັດ | Android 4.1 ຂຶ້ນໄປ |

ຖ້າຫາກວ່າອຸປະກອນທີ່ ທ່ານຈະຕິດຕັ້ງມີສະເປັກທີ່ຕໍ່າກວ່າຂໍ້ມູນທີ່ລະບຸໄວ້ ອາດຈະເຮັດໃຫ້ແອັບພິເຄຊັນບໍ່ສາມາດເຮັດວຽກໄດ້ປົກະຕິ ຫຼື ອາດຈະຕິດຕັ້ງບໍ່ໄດ້.

## 2. ຂັ້ນຕອນການດາວໂຫຼດໂປຣແກຣມ.

ເຂົ້າເວັບບາວເຊີ ແລ້ວພິມ www.egc.gov.la → ການບໍລິການ → ລະບົບການສື່ສານຂອງພາກລັດ G-Chat ຫຼື ສາມາດ Scan QR Code ເພື່ອດາວໂຫຼດ ແລ້ວກົດເລືອກຕາມລະບົບມືຖືຂອງທ່ານ.

- ດາວໂຫຼດ ແລະ ຕິດຕັ້ງໂປຣແກຣມ G-Chat (ສຳລັບແອນດຣອຍ)

ເມື່ອທ່ານກົດລິ້ງດາວໂຫຼດ ຫຼື ສະແກນ QR Code ແລ້ວ ຈະຂຶ້ນມາສູ່ໜ້າຕ່າງໃຫ້ດາວໂຫຼດ ແອັບພິເຄຊັນເພື່ອຈະຕິດຕັ້ງ ເຊິ່ງຈະມີປຸ່ມ **" CLICK INSTALL "** ໃນການດາວໂຫຼດ.







ໂປຣແກຣມຈະດາວໂຫຼດຟາຍຕິດຕັ້ງໃຫ້ ເນື່ອງຈາກວ່າບໍ່ໄດ້ຕິດຕັ້ງຜ່ານ Play Store → ລໍຖ້າໃຫ້ໂປຣແກຣມດາວໂຫຼດສຳເລັດ → ຈາກນັ້ນກໍ່ກົດປຸ່ມ Open ຫຼື ເລື່ອນໜ້າຈໍຈາກເທິງລົງລຸ່ມ ແລ້ວກົດໃສ່ໂປຣແກຣມທີ່ມີຊື່ວ່າ : smartlink-v2.x.x-rele.apk



## 3. ຂັ້ນຕອນການຕິດຕັ້ງ ລະບົບການສື່ສານຂອງພາກລັດ G-Chat.

ໂທລະສັບຈະໃຫ້ກົດ Settings ຕັ້ງຄ່າ → Unknown sources ແຫຼ່ງທີ່ມາບໍ່ຮູ້ຈັກ → ກົດຕົກລົງ OK










ກົດຕິດຕັ້ງຕາມຂັ້ນຕອນ Install → ລໍຖ້າໂປຣແກຣມຕິດຕັ້ງ → ສຳເລັດແລ້ວກໍ່ກົດ Open ໄດ້ເລີຍ









# 4. ແນະນຳການເຂົ້າໃຊ້ລະບົບການສື່ສານຂອງພາກລັດ G-Chat ເບື້ອງຕົ້ນ




**User Name** : ພິມຊື່ ຂອງຜູ້ໃຊ້ງານ **(ຊື່ຂຶ້ນຕົ້ນຕ້ອງໃສ່ເປັນຕົວພິມໃຫຍ່ Test).**

**Password** : ພິມລະຫັດຜ່ານສຳຫຼັບເຂົ້ານຳໃຊ້ລະບົບ.

**Remember Password** : ກົດໃສ່ເພື່ອໃຫ້ແອັບພິເຄຊັນ ຈື່ລະຫັດໄວ້ໃນການເຂົ້າໃຊ້ຄັ້ງຕໍ່ໄປ.

**Login with Sms Code** : ການເຂົ້ານຳໃຊ້ໂດຍຂໍລະຫັດຜ່ານຈາກຂໍ້ຄວາມຜ່ານເບີໂທລະສັບ.

**Forget Password** : ກໍລະນີລືມລະຫັດຜ່ານ ແມ່ນໃຫ້ພິມຊື່ຂອງຜູ້ໃຊ້ໃສ່ທີ່ຫ້ອງ User Name ແລ້ວກົດໄປທີ່ Get Sms Code ເພື່ອລະບົບຈະໄດ້ສົ່ງລະຫັດຜ່ານໃໝ່ໄປໃຫ້ທາງຂໍ້ຄວາມ

ຫຼັງຈາກຕິດຕັ້ງໂປຣແກຣມສຳເລັດແລ້ວເມື່ອເຂົ້າສູ່ລະບົບແອັບພິເຄຊັນ G-Chat ຈະສະແດງໜ້າຕ່າງ ເຂົ້ານຳໃຊ້ລະບົບ Login ແລະ ໃຫ້ພິມ ຊື່ຜູ້ໃຊ້ງານ ແລະ ລະຫັດຜ່ານ ຈາກນັ້ນກໍ່ກົດປຸ່ມ Login ໄດ້ເລີຍ.

- ຫາກທ່ານໃດມີປັນຫາໃນການເຂົ້ານຳໃຊ້ລະບົບ ຫຼື ລະຫັດຜ່ານມີປັນຫາ ໃຫ້ຜູ້ຮັບຜິດຊອບຂອງພາກສ່ວນທ່ານຕິດຕໍ່ຫາ ສູນບໍລິຫານລັດດ້ວຍເອເລັກໂຕຣນິກໄດ້ຕາມທີ່ຢູ່ຂ້າງເທິງ.

## 5. ການນຳໃຊ້ລະບົບການສື່ສານຂອງພາກລັດ G-Chat

ລະບົບການສື່ສານຂອງພາກລັດ ມີໜ້າຕ່າງຫຼັກໆ 3 ພາກສ່ວນດັ່ງນີ້:

### 5.1 ໜ້າຕ່າງຂອງຜູ້ໃຊ້ງານ (ຂ້ອຍ ຫຼື Me)

ໃນໜ້າຕ່າງຂອງຜູ້ໃຊ້ລະບົບການສື່ສານຂອງພາກລັດ ຈະສະແດງລາຍລະອຽດຕ່າງໆຕາມລຳດັບດັ່ງນີ້ : ຮູບໂປຣຟາຍ, ຊື່ ແລະ ນາມສະກຸນ, ລະຫັດພະນັກງານ, ເບີໂທລະສັບ, ບ່ອນເຮັດວຽກປັດຈຸບັນ, ເວີຊັນຂອງແອັບ, ການປ່ຽນລະຫັດຜ່ານໃໝ່, ອອກຈາກລະບົບ(Logout) ແລະ ປຸ່ມປ່ຽນພາສາ.




- ໃນກໍລະນີທີ່ຜູ້ໃຊ້ ຕ້ອງການປ່ຽນ ລະຜ່ານດ້ວຍຕົນເອງກໍ່ສາມາດເຮັດໄດ້ດ້ວຍວິທີການດັ່ງຕໍ່ໄປນີ້:

  - ກົດເຂົ້າໄປທີ່ປຸ່ມ Change Password → ໃສ່ລະຫັດຕາມຂັ້ນຕອນ → ກົດປຸ່ມ ຢືນຢັນການປ່ຽນແປງ.




ລະຫັດເກົ່າ : ລະຫັດຜ່ານປັດຈຸບັນຂອງທ່ານ

ລະຫັດໃໝ່ : ລະຫັດຜ່ານໃໝ່ທີ່ຕ້ອງການປ່ຽນ

ຢືນຢັນລະຫັດ : ຢືນຢັນລະຫັດຜ່ານໃໝ່ອີກເທື່ອໜຶ່ງ

## 5.2 ໜ້າຕ່າງຂອງຂໍ້ຄວາມ (Message)

ໜ້າຕ່າງທີ່ສະແດງການສົນ ທະນາທັງໝົດ ທັງໃນຮູບແບບສ່ວນຕົວ ແລະ ແບບເປັນກຸ່ມ ພ້ອມທັງຄົ້ນຫາຜູ້ໃຊ້ງານໃໝ່ ແລະ ສ້າງກຸ່ມສົນ ທະນາໃໝ່. ເຊິ່ງໜ້າຕ່າງນີ້ຈະເປັນໜ້າຫຼັກຂອງການນຳໃຊ້ລະບົບສົນ ທະນາພາກລັດ G-Chat.




- **ການສົນທະນາ Message**

ລະບົບສົນທະນາພາກລັດ G-Chat ແມ່ນສາມາສົນທະນາໄດ້ຜ່ານຂໍ້ຄວາມ, ຂໍ້ມູນຮູບພາບ, ການສົນທະນາຜ່ານຂໍ້ຄວາມສຽງ, ວີດີໂອ ແລະ ອື່ນໆໄດ້ທັງແບບສ່ວນບຸກຄົນ ແລະ ແບບກຸ່ມ. ພ້ອມທັງເມນູໃຫ້ເລືອກໃຊ້ຫຼາກຫຼາຍເຊັ່ນ:








ການສົ່ງຂໍ້ຄວາມແບບສຽງ ການສົ່ງສະຕິກເກີ້ ການໃຊ້ເມນູເພີ່ມເຕີມ

- **ການສົນທະນາ ແບບສຽງ ແລະ ສົນທະນາແບບເຫັນພາບ**




ໃນການສົນທະນາໃນຮູບແບບການໂທນີ້ ແມ່ນໃຫ້ກົດໄປທີ່ປຸ່ມ ໂທວິດີໂອ ແລ້ວທ່ານຈະເປັນມີ 2 ແບບໃຫ້ເລືອກຄື: ກົດໂທ ແລະ ໂທວິດີໂອ.






- ## ການສົນທະນາ ແບບເປັນກຸ່ມ

ການສົນທະນາແບບກຸ່ມ ຜູ້ທີ່ສ້າງກຸ່ມຂຶ້ນມາ ສາມາດເພີ່ມຜູ້ໃຊ້ໄດ້ຕາມຄວາມຕ້ອງ, ສາມາດໃສ່ຊື່ກຸ່ມເປັນພາສາລາວ ແລະ ພາສາອັງກິດ, ໃສ່ຮູບໂປຣຟາຍກຸ່ມ, ສາມາດເບິ່ງຈຳນວນສະມາຊິກ ແລະ ກຳນົດຜູ້ຢູ່ໃນກຸ່ມໃຫ້ເປັນ Admin ກຸ່ມໄດ້ອີກດ້ວຍ.







## 5.3 ໜ້າຕ່າງຂອງລາຍການຕິດຕໍ່ (Adress Book)

ໜ້າຕ່າງຂອງການສະແດງໂຄ່ງຮ່າງການຈັດຕັ້ງ ຂອງບັນດາ ກົມ/ສູນ ທີ່ຢູ່ພາຍໃນກະຊວງທີ່ຜູ້ໃຊ້ສັງກັດຢູ່




